**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງກະສິກຳ ແລະ ສິ່ງແວດລ້ອມ

ວິທະຍາໄລກະສິກຳ ແລະ ປ່າໄມ້ ບໍລິຄຳໄຊ

ເລກທີ...669.../ວກປບ

ບໍລິຄຳໄຊ, ວັນທີ...3..7..2026

## ໜັງສືແຈ້ງເຊີນປະມູນ

01. ວິທະຍາໄລ ກະສິກຳ ແລະ ປ່າໄມ້ ບໍລິຄຳໄຊ ຂໍເຊີນບັນດາທ່ານ ຫົວໜ້າບໍລິສັດທີ່ສົນໃຈ ແລະ ມີຄຸນນະວຸດທິເໝາະສົມເຂົ້າຍື່ນຊອງປະມູນໂຄງການສ້ອມແປງຫ້ອງຮຽນຕຶກເບີ 21 ຂອງວິທະຍາໄລກະສິກຳ ແລະ ປ່າໄມ້ ບໍລິຄຳໄຊ ກຳນົດໄລຍະເວລາ 15 ວັນ;
02. ການປະມູນຈະດຳເນີນຕາມຂັ້ນຕອນການປະມູນເປີດກວ້າງ ທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍ ວ່າດ້ວຍການຈັດ ຊື້-ຈັດຈ້າງ ດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທ 02 ພະຈິກ 2017 ແລະ ຄຳແນະນຳກ່ຽວ ກັບການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
03. ການປະມູນນີ້ ອະນຸຍາດໃຫ້ທຸກໆບໍລິສັດ ທີ່ມີຄຸນນະວຸທິເໝາະສົມ, ມີໃບອະນຸຍາດດຳເນີນທຸລະກິດ ປະຕິບັດຊັ້ນ 01, 02 ຫຼື 03 ຖືກຕ້ອງຕາມກົດໝາຍ ທີ່ກ່ຽວພັນກັບການກໍ່ສ້າງດັ່ງກ່າວ;
04. ບໍລິສັດ ທີ່ມີຄຸນວຸດທິເໝາະສົມ ສົນໃຈສາມາດຕິດຕໍ່ພົວພັນໄດ້ທີ່ ວິທະຍາໄລກະສິກຳ ແລະ ປ່າໄມ້ ບໍລິຄຳໄຊ; ສອບຖາມຂໍ້ມູນ ແລະ ລົງກວດກາສະໜາມຕົວຈິງໄດ້ ໂດຍພົວພັນຫາ ທ່ານ ບຸນປະສິດ ສາຍວົງທອງ ຮອງ ຫົວໜ້າ ພະແນກການບໍລິຫານ ແລະ ແຜນການ, ເບີໂທລະສັບ 020 2282 4899, Email: bounpasit.svt @ gmail.com ແລະ ຊື້ເອກະສານປະມູນໄດ້ຕາມສະຖານທີ່ຂ້າງລຸ່ມນີ້ (ໃນໂມງລັດຖະການ) ນັບແຕ່ມື້ແຈ້ງການເປັນຕົ້ນໄປ;
05. ບໍລິສັດໃດ ທີ່ຕ້ອງການຊື້ເອກະສານປະມູນຄົບຊຸດເປັນພາສາລາວ ຕ້ອງຍື່ນໜັງສືສະເໜີຫາ ພະແນກການບໍລິຫານ ແລະ ແຜນການ ວິທະຍາໄລກະສິກຳ ແລະ ປ່າໄມ້ ບໍລິຄຳໄຊ (ໃນໂມງລັດຖະການ), ເລີ້ມແຕ່ ວັນທີ 03 ກໍລະກົດ 2026 ເປັນຕົ້ນໄປ, ໃນລາຄາ 1,000,000 ກີບຕໍ່ຊອງ ຫຼື ເປັນສະກຸນເງິນອື່ນທຽບເທົ່າ, ຈຳນວນເງິນດັ່ງກ່າວນີ້ ຈະບໍ່ມີການສົ່ງຄືນ ແລະ ວິທີການຊຳລະຕ້ອງຈ່າຍເປັນເງິນສົດ ຫຼື ເຊັກເງິນສົດ;
06. ຊອງປະມູນຕ້ອງສົ່ງທີ່ຢູ່ລຸ່ມນີ້, ໃນເວລາ ຫຼື ກ່ອນເວລາ 10:00 ໂມງ, ວັນທີ 17 ກໍລະກົດ 2026 ທີ່ ຫ້ອງປະຊຸມ ວິທະຍາໄລກະສິກຳ ແລະ ປ່າໄມ້ ບໍລິຄຳໄຊ ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກຳນົດໄວ້ ຈະບໍ່ຮັບເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ. ຊອງປະມູນທຸກໆ ຊອງຈະໄດ້ເປີດໃນເວລາ 10:30 ໂມງ, ວັນທີ 17 ກໍລະກົດ 2026 ທີ່ ຫ້ອງປະຊຸມ ວິທະຍາໄລກະສິກຳ ແລະ ປ່າໄມ້ ບໍລິຄຳໄຊ ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈເຂົ້າຮ່ວມຕາມສະຖານທີ່ຂ້າງລຸ່ມນີ້;
07. ທຸກໆ ຊອງປະມູນຕ້ອງໄດ້ມີໜັງສືຄ້ຳປະກັນການປະມູນດ້ວຍກຽດ ຫຼື ໜັງສືຄ້ຳປະກັນການປະມູນ ຈາກທະນາຄານ ຢ່າງໜ້ອຍບໍ່ໃຫ້ຫຼຸດ 2% ຂອງລາຄາສະເໜີເຂົ້າປະມູນ;
08. ທີ່ຢູ່: ວິທະຍາໄລກະສິກຳ ແລະ ປ່າໄມ້ ບໍລິຄຳໄຊ ຕັ້ງຢູ່ບ້ານ ຫ້ວຍຄູນ, ເມືອງ ບໍລິຄັນ, ແຂວງ ບໍລິຄຳໄຊ

**ອຳນວຍການວິທະຍາໄລ**

ປອ. ສົມທອນ ດວງມາລາ